ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ເລກທີ.447./ກຍ

ນະຄອນຫຼວງວຽງຈັນ,ວັນທີ.05./ມ.ສ./2019

# ຄຳແນະນຳ

## ຂອງລັດຖະມົນຕີ ກະຊວງຍຸຕິທຳ ກ່ຽວກັບການຕີລາຄາ, ການຂາຍ ແລະ ການມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 411/ນຍ, ລົງວັນທີ 10 ພະຈິກ 2016 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະລັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການ ການຕີລາຄາ, ການຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ເພື່ອຮັບປະກັນໃຫ້ການຕີລາຄາ, ການຂາຍ ແລະ ການມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ດຳເນີນຢ່າງເປັນລະບົບ ແລະ ເອກະພາບໃນຂອບເຂດທົ່ວປະເທດ ລັດຖະມົນຕີກະຊວງຍຸຕິທຳ ອອກຄຳແນະນຳ ດັ່ງນີ້:

### I. ຈຸດປະສົງ

- ເພື່ອເປັນບ່ອນອີງໃຫ້ແກ່ອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນການຕິດຕາມ, ກວດກາ ແລະ ຊີ້ນຳ;
- ເພື່ອເປັນບ່ອນອີງໃຫ້ແກ່ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນການຊີ້ນຳພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບການຕີລາຄາ, ການຂາຍ ແລະ ການມອບຊັບ ໃຫ້ມີຄວາມໂປ່ງໃສ, ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
- ເພື່ອເຮັດໃຫ້ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ພະນັກງານທີ່ກ່ຽວຂ້ອງມີຄວາມຮັບຮູ້, ເຂົ້າໃຈເປັນເອກະພາບໃນການຈັດຕັ້ງປະຕິບັດ.

### II. ຄວາມໝາຍຂອງຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

#### 1. ຄວາມໝາຍຂອງຊັບ

ຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ກຳນົດຢູ່ໃນຄຳແນະນຳສະບັບນີ້ ໝາຍເຖິງຊັບເຄື່ອນທີ່ ແລະ ຊັບຄົງທີ່ ຊຶ່ງເປັນຫຼັກຊັບຄ້ຳປະກັນ ແລະ ບໍ່ເປັນຫຼັກຊັບຄ້ຳປະກັນ.

#### 2. ຄວາມໝາຍຂອງຄຳສັບ ທີ່ນຳໃຊ້ໃນຄຳແນະນຳສະບັບນີ້

- ຊັບຄ້ຳປະກັນ: ແມ່ນຊັບສິ່ງຂອງທຸກປະເພດ ທີ່ເປັນກຳມະສິດຂອງໂຈດ, ຈຳເລີຍ, ບຸກຄົນທີສາມ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໄດ້ຕົກລົງເອົາໄປຄ້ຳປະກັນກັບເຈົ້າໜີ້ ເພື່ອຮັບປະກັນການປະຕິບັດສັນຍາ ຫຼື ການໃຊ້ແທນໜີ້ສິນ ຕາມທີ່ກຳນົດໄວ້ໃນຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ຫຼື ຄຳຕັດສິນ, ຄຳພິພາກສາ ໃຫ້ປະຕິບັດພາງ;

- ຊັບທີ່ບໍ່ເປັນຫຼັກຊັບຄໍ້າປະກັນ: ແມ່ນຊັບສິ່ງຂອງທຸກປະເພດ ທີ່ມີຂໍ້ມູນຫຼັກຖານຢັ້ງຢືນເຖິງກຳມະສິດ ຫຼື ການໄດ້ມາຂອງຜູ້ຖືກປະຕິບັດຄຳຕັດສິນ ຊຶ່ງຜູ້ກ່ຽວພວມຄອບຄອງ, ນຳໃຊ້ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງອື່ນຄອບຄອງ, ນຳໃຊ້ຕາມຂໍ້ຜູກພັນໃດໜຶ່ງ ທີ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານໄດ້ກວດພົບ ແລະ ໄດ້ຂຶ້ນບັນຊີ, ຍຶດ ຫຼື ອາຍັດໄວ້;
- ຊັບທີ່ເປັນກຳມະສິດຂອງລູກໜີ້ ຫຼື ຜູ້ຖືກປະຕິບັດຄຳຕັດສິນ: ແມ່ນຊັບສິ່ງຂອງທຸກປະເພດ ທີ່ມີຂໍ້ມູນຫຼັກຖານຢັ້ງຢືນເຖິງກຳມະສິດ ຫຼື ການໄດ້ມາຂອງຜູ້ຖືກປະຕິບັດຄຳຕັດສິນ ຊຶ່ງຜູ້ກ່ຽວພວມຄອບຄອງ, ນຳໃຊ້ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງອື່ນຄອບຄອງ, ນຳໃຊ້ຕາມຂໍ້ຜູກພັນໃດໜຶ່ງ;
- ຊັບທີ່ໄດ້ຮັບສິດຈາກເຈົ້າຂອງຊັບ: ແມ່ນຊັບທີ່ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໄດ້ມອບໃຫ້ເປັນກຳມະສິດແກ່ຜູ້ຖືກປະຕິບັດຄຳຕັດສິນ ໂດຍຂໍ້ຜູກພັນໃດໜຶ່ງ ແຕ່ຊັບນັ້ນຍັງບໍ່ທັນໄດ້ຂຶ້ນທະບຽນເປັນຊື່ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ.

## III. ວິທີ ແລະ ຂັ້ນຕອນການຕີລາຄາຊັບ

### 1. ວິທີການຕີລາຄາຊັບ

ການຕີລາຄາຊັບໃຫ້ດຳເນີນຕາມວິທີ ດັ່ງນີ້:

**1.1. ການຕົກລົງລາຄາໂດຍຄູ່ຄວາມ**

ພາຍຫຼັງສິ້ນສຸດກຳນົດເວລາ ຫົກສິບວັນ, ຖ້າຫາກຜູ້ຖືກປະຕິບັດຄຳຕັດສິນຍັງບໍ່ສາມາດຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫຼື ປະຕິບັດບໍ່ຄົບຖ້ວນ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຮຽກຄູ່ຄວາມເຂົ້າມາເພື່ອຕົກລົງລາຄາຫຼັກຊັບຄໍ້າປະກັນ ຫຼື ຊັບທີ່ກວດພົບ, ການຕົກລົງດັ່ງກ່າວຕ້ອງເຮັດຈົດໝາຍບັນທຶກ ແລະ ໃຫ້ຖືເອົາລາຄານັ້ນເປັນລາຄາປະກາດຂາຍຕາມຂັ້ນຕອນຂອງກົດໝາຍ.

ຄູ່ຄວາມ ສາມາດຕົກລົງລາຄາຊັບໄດ້ທຸກຂັ້ນຕອນ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**1.2. ການຕີລາຄາໂດຍຜູ້ຊ່ຽວຊານ ຫຼື ນິຕິບຸກຄົນ ຕາມການສະເໜີຂອງຄູ່ຄວາມ**

ບົນພື້ນຖານຄວາມເປັນເອກະພາບ ຄູ່ຄວາມສາມາດສະເໜີເອົາຜູ້ຊ່ຽວຊານ ຫຼື ນິຕິບຸກຄົນໃດໜຶ່ງ ເພື່ອມາຕີລາຄາຊັບ. ການຕີລາຄາຊັບໃນກໍລະນີດັ່ງກ່າວນີ້ ໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນຜູ້ອອກຂໍ້ຕົກລົງ ໃຫ້ຊ່ຽວຊານ ຫຼື ນິຕິບຸກຄົນ ດຳເນີນການຕີລາຄາຊັບ ໂດຍກຳນົດເວລາ, ສະຖານທີ່, ຊັບທີ່ເປັນເປົ້າໝາຍ, ຄວາມຮັບຜິດຊອບຂອງຜູ້ຕີລາຄາ, ຜົນຕອບແທນ ແລະ ບັນຫາສຳຄັນອື່ນ. ພາຍຫຼັງສຳເລັດ ໃຫ້ຖືເອົາລາຄານັ້ນເປັນລາຄາປະກາດຂາຍຕາມຂັ້ນຕອນຂອງກົດໝາຍ.

ສຳລັບຄ່າໃຊ້ຈ່າຍແມ່ນໃຫ້ປະຕິບັດຕາມການຕົກລົງຂອງຄູ່ຄວາມ.

**1.3. ການຕີລາຄາໂດຍຄະນະກຳມະການ**

ຊັບທີ່ຄູ່ຄວາມບໍ່ສາມາດຕົກລົງລາຄາກັນໄດ້ ຫຼື ບໍ່ຕົກລົງໃຫ້ຜູ້ຊ່ຽວຊານ, ນິຕິບຸກຄົນຕີລາຄາ ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກໍຈະມອບໃຫ້ຄະນະກຳມະການເປັນຜູ້ຕີລາຄາ.

ຄະນະກຳມະການຕີລາຄາຊັບ ທີ່ໄດ້ຮັບການແຕ່ງຕັ້ງ ມີສິດ, ໜ້າທີ່ຕີລາຄາຊັບຕາມທີ່ກຳນົດໄວ້ໃນມາດຕາ 9 ຂອງດຳລັດ 158/ລບ, ລົງວັນທີ 4 ມິຖຸນາ 2013 ແລະ ມີຄວາມຮັບຜິດຊອບ ດັ່ງນີ້:

- ອະທິບາຍຊີ້ແຈງ ໃຫ້ເຈົ້າຂອງຊັບຊາບ ກ່ຽວກັບການຕີລາຄາຊັບນັ້ນ;
- ດຳເນີນການຕີລາຄາຊັບຕົວຈິງ;
- ສະຫຼຸບລາຍງານຜົນການຕີລາຄາ ໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຈາກການກະທຳໂດຍເຈດຕະນາ ໃນການຕີລາຄາຊັບ.

### 2. ຂັ້ນຕອນການຕີລາຄາ.

ການຕີລາຄາຊັບໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

**2.1. ການກະກຽມ**

### 2.1.1. ການເກັບກຳຂໍ້ມູນ

ເພື່ອຮັບປະກັນໃນການຕີລາຄາຊັບໃຫ້ມີຄວາມຖືກຕ້ອງ, ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງກະກຽມຂໍ້ມູນຂອງຊັບທີ່ຈະຕີລາຄານັ້ນໃຫ້ລະອຽດ ເປັນຕົ້ນ: ປະເພດ, ທີ່ຕັ້ງ, ຈຳນວນ, ເນື້ອທີ່ ຫຼື ບໍລິມາດຂອງຊັບ ແລະ ເອກະສານທີ່ກ່ຽວຂ້ອງ.

### 2.1.2. ການແຕ່ງຕັ້ງຄະນະກຳມະການ

ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດໜັງສືສະເໜີເປັນລາຍລັກອັກສອນຕິດຂັດກັບຮ່າງຂໍ້ຕົກລົງ ແລະ ແຜນການຈັດຕັ້ງປະຕິບັດ ເພື່ອຂໍອະນຸມັດແຕ່ງຕັ້ງຄະນະກຳມະການຈາກອົງການປົກຄອງຂັ້ນຂອງຕົນ.

### 2.1.3. ການຂຶ້ນແຜນຕີລາຄາ

ຄະນະກຳມະການທີ່ໄດ້ຮັບການແຕ່ງຕັ້ງ ຕ້ອງສ້າງແຜນການລົງຕີລາຄາຊັບ, ໃນແຜນການນັ້ນຕ້ອງໄດ້ກຳນົດລາຍລະອຽດ ເຊັ່ນ: ຈຸດປະສົງ, ວັນ, ເວລາ, ສະຖານທີ່, ເປົ້າໝາຍຜູ້ເຂົ້າຮ່ວມ ແລະ ງົບປະມານໃຊ້ຈ່າຍ ແລ້ວສະເໜີຕໍ່ຫົວໜ້າຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອອະນຸມັດ.

### 2.1.4. ການເຊີນຜູ້ເຂົ້າຮ່ວມ

ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງເຊີນ ໂຈດ, ຈຳເລີຍ, ບຸກຄົນທີສາມ, ເຈົ້າຂອງຊັບ ຫຼື ບຸກຄົນ, ນິຕິບຸກຄົນທີ່ກ່ຽວຂ້ອງເຂົ້າຮ່ວມການຕີລາຄາຢ່າງຊ້າໃຫ້ໄດ້ຮັບບັດເຊີນກ່ອນມື້ຕີລາຄາ ສາມວັນ ລັດຖະການ, ໃນບັດເຊີນດັ່ງກ່າວຕ້ອງກຳນົດແຈ້ງກ່ຽວກັບວັນ, ເວລາ, ສະຖານທີ່ ແລະ ຈຸດປະສົງ.

## 2.2. ການດຳເນີນຕີລາຄາຊັບ

### 2.2.1. ການເຕົ້າໂຮມຄະນະກຳມະການ ແລະ ຜູ້ເຂົ້າຮ່ວມ

ພາຍຫຼັງເຕົ້າໂຮມກັນຢູ່ສະຖານທີ່ໃດໜຶ່ງແລ້ວ, ຄະນະກຳມະການ ຕ້ອງແຈ້ງຊື່ຄະນະກຳມະການ, ຜູ້ເຂົ້າຮ່ວມ , ຈຸດປະສົງ ແລະ ລາຍງານເນື້ອໃນຄຳຕັດສິນຂອງສານໂດຍຫຍໍ້, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນໄລຍະຜ່ານມາ, ເຫດຜົນໃນການຕີລາຄາຊັບ, ຂໍ້ມູນກ່ຽວກັບຊັບທີ່ໄດ້ເກັບກຳຜ່ານມາໃຫ້ຜູ້ເຂົ້າຮ່ວມຊາບ. ຈາກນັ້ນ, ຄະນະກຳມະການຈຶ່ງລົງກວດກາຊັບຕົວຈິງ.

### 2.2.2. ການກວດກາຊັບ

ຄະນະກຳມະການຕ້ອງລົງກວດກາເບິ່ງຊັບທີ່ຈະຕີລາຄາໃຫ້ລະອຽດ ເປັນຕົ້ນ: ປະເພດ, ເນື້ອທີ່, ທີ່ຕັ້ງ, ຈຳນວນ, ບໍລິມາດ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບຊັບ. ການກວດກາແຕ່ລະຄັ້ງຕ້ອງເຮັດບົດບັນທຶກໃຫ້ຊັດເຈນ, ແລ້ວອ່ານຊ້ອງໜ້າໃຫ້ຜູ້ເຂົ້າຮ່ວມຟັງ ແລະ ລົງລາຍເຊັນໄວ້.

ສຳລັບການກວດກາຄຸນນະພາບຊັບຕົວຈິງນັ້ນ ໃຫ້ອີງໃສ່ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

### 2.2.3. ການຕົກລົງລາຄາ

ຄະນະກຳມະການຕ້ອງຄົ້ນຄວ້າ, ວິເຄາະ, ວິໄຈ ບັນດາຂໍ້ມູນຫຼັກຖານທີ່ເກັບກຳໄດ້ ໂດຍອີງໃສ່ນິຕິກຳທີ່ກ່ຽວຂ້ອງ ແລ້ວພ້ອມກັນຕົກລົງລາຄາຊັບແຕ່ລະປະເພດ ແລະ ລົງລາຍເຊັນຮັບຮອງ.

ໃນກໍລະນີ ທີ່ມີຄວາມຈຳເປັນຕ້ອງມີຄວາມເຫັນກ່ຽວກັບດ້ານເຕັກນິກ, ວິຊາການ ກ່ອນຈະຕົກລົງລາຄາ ຄະນະກຳມະການຕ້ອງສະເໜີຫາຂະແໜງການທີ່ກ່ຽວຂ້ອງເພື່ອຢັ້ງຢືນ.

### 2.2.4. ການສ້າງບົດບັນທຶກ

ການກວດກາ-ຕີລາຄາຊັບທຸກຄັ້ງ ຄະນະກຳມະການຕ້ອງເຮັດບົດບັນທຶກຢ່າງລະອຽດ ໂດຍລະບຸ ວັນ, ເວລາ , ສະຖານທີ່, ຊື່ ແລະ ນາມສະກຸນຂອງຄະນະກຳມະການ, ຜູ້ເຂົ້າຮ່ວມ. ເນື້ອໃນບົດບັນທຶກຕ້ອງບົ່ງບອກຢ່າງຈະແຈ້ງ ເປັນຕົ້ນ: ປະເພດ, ເນື້ອທີ່, ທີ່ຕັ້ງ, ຈຳນວນ, ບໍລິມາດ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບຊັບ.

ກໍລະນີ ຊັບທີ່ສາມາດຕີລາຄາໄດ້ທັນທີ ກໍໃຫ້ສ້າງບົດບັນທຶກຕາມເນື້ອໃນທີ່ລະບຸໄວ້ຂ້າງເທິງນີ້ ລວມທັງບ່ອນອີງ ແລະ ເຫດຜົນການຕີກລິງລາຄາຂອງຄະນະກຳມະການ, ແລ້ວອ່ານໃຫ້ຜູ້ເຂົ້າຮ່ວມທັງໝົດຊາບ ແລະ ລົງລາຍເຊັນໄວ້ ພ້ອມທັງແຈ້ງກຳນົດເວລາໃນການຄັດຄ້ານໃຫ້ເຈົ້າຂອງຊັບຊາບ.

ກໍລະນີ ຜູ້ຖືກປະຕິບັດຄຳຕັດສິນ ຫຼື ເຈົ້າຂອງຊັບຫາກບໍ່ເຂົ້າຮ່ວມການຕີລາຄາ ຫຼື ເຂົ້າຮ່ວມ ແຕ່ບໍ່ລົງລາຍເຊັນ ກໍໃຫ້ຂຽນແຈ້ງໃສ່ບົດບັນທຶກນັ້ນພ້ອມ.

2.3. ການແຈ້ງຜົນຂອງການຕີລາຄາ

ພາຍຫຼັງໄດ້ຕີລາຄາຊັບແລ້ວ ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງກ່ຽວກັບການຕີລາຄານັ້ນເປັນລາຍລັກອັກສອນໃຫ້ໂຈດ, ຈຳເລີຍ, ບຸກຄົນທີສາມ, ເຈົ້າຂອງຊັບຊາບ ພາຍໃນກຳນົດ ສາມວັນລັດຖະການ, ໃນແຈ້ງການດັ່ງກ່າວຕ້ອງຄັດຕິດບົດບັນທຶກຕີລາຄາໄປພ້ອມ.

2.4. ການຄັດຄ້ານລາຄາ

2.4.1. ການຄັດຄ້ານ

ພາຍຫຼັງໂຈດ, ຈຳເລີຍ ບຸກຄົນທີສາມ, ເຈົ້າຂອງຊັບໄດ້ຮັບແຈ້ງຜົນຂອງການຕີລາຄາຊັບແລ້ວ, ຖ້າຫາກບໍ່ພໍໃຈຕໍ່ການຕີລາຄາຊັບຂອງຄະນະກຳມະການ ມີສິດຄັດຄ້ານໂດຍຍື່ນຄຳຮ້ອງພ້ອມທັງສະເໜີເຫດຜົນທີ່ບໍ່ພໍໃຈ ພາຍໃນກຳນົດເວລາ ເຈັດວັນ ລັດຖະການ, ນັບແຕ່ມື້ໄດ້ຮັບແຈ້ງຜົນຂອງການຕີລາຄາເປັນຕົ້ນໄປ.

ການຄັດຄ້ານໃນກໍລະນີຕີລາຄາຊັບບໍ່ຄົບຖ້ວນໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານກ່ຽວຂ້ອງທີ່ໄດ້ຕີລາຄາຜ່ານມານັ້ນ.

ຜູ້ຖືກປະຕິບັດຄຳຕັດສິນ ຫຼື ເຈົ້າຂອງຊັບບໍ່ພໍໃຈຕໍ່ລາຄາ ຫຼື ການຕີລາຄາຊັບທີ່ບໍ່ຖືກເປົ້າໝາຍ ໃຫ້ຍື່ນຄຳຮ້ອງຕໍ່ອົງການ ດັ່ງນີ້:

- ກໍລະນີ ການຕີລາຄາຊັບຂອງຄະນະກຳມະການຂັ້ນເມືອງ, ນະຄອນ, ເທດສະບານ ໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາ;
- ກໍລະນີ ການຕີລາຄາຊັບຂອງຄະນະກຳມະການຂັ້ນແຂວງ, ນະຄອນຫຼວງ ໃຫ້ຍື່ນຄຳຮ້ອງຕໍ່ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ ເປັນຜູ້ພິຈາລະນາ.

2.4.2. ການຄົ້ນຄວ້າ ແລະ ແກ້ໄຂການຄັດຄ້ານການຕີລາຄາ

ກົມຄຸ້ມຄອງ, ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າໃຫ້ສຳເລັດ ພາຍໃນກຳນົດ ສິບວັນ ລັດຖະການ, ຖ້າເຫັນວ່າບໍ່ມີເຫດຜົນກໍໃຫ້ແຈ້ງຕອບເປັນລາຍລັກອັກສອນແກ່ຜູ້ຂຽນຄຳຮ້ອງ ພາຍໃນກຳນົດ ສາມວັນ ລັດຖະການ. ຖ້າເຫັນວ່າມີເຫດຜົນພຽງພໍ ຕ້ອງແຈ້ງໃຫ້ຄະນະກຳມະການຊາບ ພາຍໃນກຳນົດ ສາມວັນ ລັດຖະການ ເພື່ອຕີລາຄາຄືນໃໝ່. ກໍລະນີ ມີການລຶບລ້າງການຕີລາຄາຜ່ານມາ ຕ້ອງອອກຄຳສັ່ງລຶບລ້າງ ແລະ ຕີລາຄາຄືນໃໝ່ ແລ້ວແຈ້ງໃຫ້ຄະນະກຳມະການຊາບ ພາຍໃນກຳນົດ ສາມວັນ ລັດຖະການ.

ຜູ້ສະເໜີໃຫ້ຕີລາຄາຄືນໃໝ່ຈະບໍ່ໄດ້ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍ ອັນເນື່ອງມາຈາກການຕີລາຄາຊັບບໍ່ຄົບຖ້ວນ, ບໍ່ຖືກເປົ້າໝາຍ, ມີຄວາມບໍ່ໂປ່ງໃສຂອງຄະນະກຳມະການ.

## IV. ວິທີ ແລະ ຂັ້ນຕອນການຂາຍຊັບ

1. ວິທີການຂາຍ

ການຂາຍຊັບມີ 2 ວິທີ ຄື: ການຂາຍຊັບໂດຍເຈົ້າຂອງຊັບ ແລະ ການຂາຍຊັບໂດຍອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງດຳລັດ ວ່າດ້ວຍການຕີລາຄາ, ການຂາຍ, ປະມູນຂາຍ ແລະ ການມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013.

2. ຂັ້ນຕອນການຂາຍຊັບ

2.1. ການຂາຍຊັບກ່ອນການຕີລາຄາຂອງຄະນະກຳມະການ

ກ່ອນການຕີລາຄາຊັບຂອງຄະນະກຳມະການ ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງຮຽກຜູ້ຖືກປະຕິບັດຄຳຕັດສິນ ຫຼື ເຈົ້າຂອງຊັບ ເຂົ້າມາແນະນຳ, ພ້ອມທັງແຈ້ງໃຫ້ຜູ້ກ່ຽວຂາຍຊັບດັ່ງກ່າວດ້ວຍ

ຕົນເອງ ພາຍໃນກຳນົດເວລາ ສາມສິບວັນ ແຕ່ບໍ່ໃຫ້ຕ່ຳກວ່າລາຄາທີ່ຄູ່ຄວາມໄດ້ປະເມີນກັນໃນເບື້ອງຕົ້ນ. ການແນະນຳ ແລະ ແຈ້ງໃຫ້ຂາຍຊັບນັ້ນ ຕ້ອງໄດ້ເຮັດບົດບັນທຶກ ແລະ ລົງລາຍເຊັນໄວ້.

ສຳລັບຊັບທີ່ກວດພົບ ກ່ອນຈະໃຫ້ເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດຄຳຕັດສິນປະກາດຂາຍນັ້ນ ຕ້ອງມີການຕົກລົງລາຄາຂອງຄູ່ຄວາມ ຫຼື ການຕີລາຄາຂອງຄະນະກຳມະການກ່ອນ.

ການຊື້-ຂາຍຕົວຈິງໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂໍ້ 1 ຂອງດຳລັດ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013.

**2.2. ການຂາຍຊັບຕາມການຕີລາຄາຂອງຄະນະກຳມະການ**

ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງໃຫ້ໂອກາດແກ່ເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດຄຳຕັດສິນຂາຍຊັບດ້ວຍຕົນເອງ ຕາມທີ່ກຳນົດໄວ້ໃນມາດຕາ 18 ຂອງດຳລັດ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013.

**2.3. ການປະກາດຂາຍຢ່າງກວ້າງຂວາງ**

ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງອອກແຈ້ງການ ປະກາດຂາຍຢ່າງກວ້າງຂວາງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງດຳລັດ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013.

ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງປະກອບເອກະສານທີ່ເປັນຂໍ້ມູນກ່ຽວກັບຊັບ ເປັນຕົ້ນ: ຮູບຖ່າຍ, ໃບທະບຽນ, ໃບຕາດິນ ແລະ ຂໍ້ມູນທີ່ຈຳເປັນອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ທີ່ມາຕິດຕໍ່ພົວພັນຊື້ຊັບດັ່ງກ່າວ.

ກໍລະນີຊັບທີ່ຈະຂາຍນັ້ນ ຫາກມີບຸກຄົນ, ນິຕິບຸກຄົນຄຸ້ມຄອງ-ນຳໃຊ້, ມີວັດຖຸສິ່ງຂອງ, ສັດລ້ຽງ ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ຍົກຍ້າຍອອກກ່ອນ. ການຍົກຍ້າຍຕົວຈິງໃຫ້ປະຕິບັດຕາມມາດຕາ 21 ຂອງດຳລັດ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013.

**2.4. ການຫຼຸດລາຄາຊັບ**

ຊັບທີ່ໄດ້ປະກາດຂາຍຢ່າງກວ້າງຂວາງແລ້ວ ແຕ່ຍັງບໍ່ໄດ້ຂາຍນັ້ນໃຫ້ຫຼຸດລາຄາຕາມທີ່ກຳນົດໄວ້ໃນມາດຕາ 19 ຂອງດຳລັດ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013.

ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ຄົ້ນຄວ້າດ້ວຍເຫດ ແລະ ຜົນໃຫ້ສອດຄ່ອງກັບຄວາມເປັນຈິງຂອງສະພາບເສດຖະກິດ-ສັງຄົມ ຢ່າງພາວະວິໄສ ຈຶ່ງອອກຄຳສັ່ງຫຼຸດລາຄາ.

**2.5. ການປະກາດຂາຍຊັບຄືນໃໝ່**

ພາຍຫຼັງໄດ້ອອກຄຳສັ່ງຫຼຸດລາຄາຊັບແລ້ວ ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ຕ້ອງປະກາດຂາຍຊັບໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງດຳລັດ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013.

## V. ການມອບຊັບ

ການມອບຊັບ ເພື່ອໄລ່ລຽງໃຊ້ແທນໜີ້ສິນ ໃຫ້ປະຕິບັດຕາມມາດຕາ 25 ຂອງດຳລັດ ສະບັບເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013, ນອກຈາກນັ້ນໃຫ້ປະຕິບັດ ດັ່ງນີ້:

- ກໍລະນີ ຊັບມີມູນຄ່າສູງກວ່າໜີ້ສິນ ແຕ່ສາມາດແບ່ງໄດ້ ກໍໃຫ້ແບ່ງເອົາຊັບດັ່ງກ່າວ ໃນມູນຄ່າເທົ່າກັບໜີ້ສິນເພື່ອມອບໃຫ້ແກ່ເຈົ້າໜີ້;
- ກໍລະນີ ເຈົ້າໜີ້ບໍ່ເຫັນດີຮັບເອົາຊັບເພື່ອໄລ່ລຽງການໃຊ້ແທນໜີ້ສິນ ໂດຍບໍ່ມີເຫດຜົນ, ໃຫ້ຢຸດເຊົາການຄິດໄລ່ດອກເບ້ຍ ແລະ ສືບຕໍ່ປະກາດຂາຍຊັບດັ່ງກ່າວ.

## VI. ການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ມີປະສິດທິຜົນຂະແໜງການກ່ຽວຂ້ອງຕ້ອງເປັນເຈົ້າການໃນການຈັດຕັ້ງປະຕິບັດ ດັ່ງນີ້:

1. ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າກຳແໜ້ນເນື້ອໃນຄຳແນະນຳສະບັບນີ້, ຊີ້ນຳຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານເມືອງ, ນະຄອນ, ເທດສະບານ ໃນຂອບເຂດທົ່ວປະເທດຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນສູງ;
2. ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳ, ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານເມືອງ, ນະຄອນ, ເທດສະບານ ແລະ ຂະແໜງການທີ່ກ່ຽວຂ້ອງເປັນເຈົ້າການຈັດຕັ້ງການເຊື່ອມຊຶມ ແລະ ເຜີຍແຜ່ຄຳແນະນຳສະບັບນີ້ໃຫ້ທົ່ວເຖິງ;
3. ພະແນກຍຸຕິທຳ, ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານເມືອງ, ນະຄອນ, ເທດສະບານ ແລະ ພາກສ່ວນທີ່ກ່ຽວຂ້ອງຕ້ອງຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
4. ມອບໃຫ້ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳແຂວງ, ນະຄອນຫຼວງ ເປັນເສນາທິການໃຫ້ລັດຖະມົນຕີກະຊວງຍຸຕິທຳ ໃນການຊີ້ນຳ-ນຳພາ, ຕິດຕາມ, ກວດກາ, ຊຸກຍູ້, ປະສານສົມທົບ, ອຳນວຍຄວາມສະດວກ, ສະຫຼຸບ, ສັງລວມສະພາບການເຄື່ອນໄຫວວຽກງານດັ່ງກ່າວຕາມພາລະບົດບາດຂອງຕົນຢ່າງເປັນປົກກະຕິ;
5. ຜ່ານການຈັດຕັ້ງປະຕິບັດຕົວຈິງ, ຖ້າຫາກວ່າມີຄວາມຫຍຸ້ງຍາກໃຫ້ລາຍງານຂໍທິດຊີ້ນຳຈາກ ລັດຖະມົນຕີກະຊວງຍຸຕິທຳ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ,

ໄຊສີ ສັນຕິວົງ